ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ເຜີຍແຜ່ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ)





ໃນວັນທີ 17 ຕຸລາ 2020 ທີ່ຫ້ອງປະຊຸມຊັ້ນ 8 ຂອງຕະຫຼາດຫຼັກຊັບລາວ ໄດ້ຈັດການເຜີຍແຜ່ກົດໝາຍວ່າດ້ວຍຫຼັກຊັບ ສະບັບປັບປຸງ ໂດຍການເປັນປະທານຂອງທ່ານນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ, ມີຄະນະກົມ, ພະແນກ, ວິຊາການພາຍໃນ ທຫລ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ການເຜີຍແຜ່ກົດໝາຍວ່າດ້ວຍຫຼັກຊັບໃນຄັ້ງນີ້ ແມ່ນເປັນກົດໝາຍທີ່ສະພາແຫ່ງຊາດ ໄດ້ຮັບຮອງໃນເດືອນ 12 ປີ 2019 ແລະ ປະທານປະເທດ ໄດ້ອອກລັດຖະດຳລັດປະກາດໃຊ້ໃນຕົ້ນປີ 2020. ແນໃສ່ເພີ່ມຕື່ມຄວາມຮັບຮູ້ ແລະ ຄວາມເຂົ້າໃຈກ່ຽວກັບກົດໝາຍດັ່ງກ່າວໃຫ້ແກ່ພາກສ່ວນຕ່າງໆໄດ້ຮັບຊາບຢ່າງເລິກເຊິ່ງຂຶ້ນກ່ວາເກົ່າ. ໃນນັ້ນ, ການເຜີຍແຜ່ໄດ້ແລກປ່ຽນຄຳຄິດເຫັນຕໍ່ບັນຫາຕ່າງໆ ເພື່ອເຮັດໃຫ້ການເຜີຍແຜ່ບັນລຸຜົນສຳເລັດຕາມຈຸດປະສົງລະດັບຄາດໝາຍ. ເຊິ່ງບັນດາພາກສ່ວນທີ່ໄດ້ຮັບຟັງການເຜີຍແຜ່ໃນຄັ້ງນີ້ແລ້ວຈະໄດ້ນຳເອົາເນື້ອໃນຈິດໃຈເອກະສານດັ່ງກ່າວໄປເຜີຍແຜ່ຕໍ່ສັງຄົມໃຫ້ມີຄວາມຮັບຮູ້ທີ່ຖືກຕ້ອງ ກ່ຽວກັບວຽກງານຕະຫຼາດທຶນ. ພ້ອມທັງມີສະຕິລະວັງຕົວບໍ່ໃຫ້ຫຼົງເຊື່ອເຂົ້າໄປຮ່ວມທຶນ ແລະ ການຊື້-ຂາຍຮຸ້ນທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ.

**# ຂ່າວ-ພາບ: ສົມພິດ ທຳມະວົງ**

**ຮັກບ້ານເກີດເມືອງນອນ ໃຊ້ ຈ່າຍ ທອນ ເປັນເງິນກີບ**